**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄໍາໄຊ
ພະແນກໂຍທາທິການ ແລະ ຂົນສົ່ງແຂວງ

ເລກທີ 3094 /ຍທຂ.
ບໍລິຄໍາໄຊ, ວັນທີ 6 ກໍລະກົດ 2026

ຊື່ໂຄງການ: ກໍ່ສ້າງທາງປູຢາງ 2 ຊັ້ນ ແຕ່ບ້ານຂອນຂວາງ - ບ້ານນານໍ້າ (ສັນຍາ 2), ລວງຍາວ 30 ກມ ເມືອງປາກກະດິງ ແຂວງບໍລິຄໍາໄຊ.
ສັນຍາເລກທີ....................

## ໜັງສືແຈ້ງເຊີນໃຫ້ເຂົ້າຮ່ວມປະມູນທີ່ປຶກສາ

- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງບໍລິຄໍາໄຊ, ສະບັບເລກທີ 429/ຍທຂ, ລົງວັນທີ 3 ກໍລະກົດ 2024 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ;
- ອີງຕາມ ໜັງສືແຈ້ງແຜນການລົງທຶນຂອງລັດ ປະຈໍາປີ 2026 (ຄັ້ງທີ່ 2) ສະບັບເລກທີ 07/ຄປຂ, ລົງວັນທີ 27 ມີນາ 2026;

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ ໄດ້ຮັບອະນຸມັດງົບປະມານແຫ່ງລັດ ປະຈໍາປີ 2026 ເພື່ອວ່າຈ້າງທີ່ປຶກສາດໍາເນີນຄຸ້ມຄອງການກໍ່ສ້າງທາງປູຢາງ 2 ຊັ້ນ ແຕ່ບ້ານຂອນຂວາງ - ບ້ານນານໍ້າ (ສັນຍາ 2) ລວງຍາວ 30 ກມ ເມືອງປາກກະດິງ ແຂວງບໍລິຄໍາໄຊ; ສໍາລັບບ້ວງເງິນທີຈະສໍາລະສະສາງແມ່ນອີງຕາມສາລະບານງົບປະມານແຫ່ງລັດໃນແຕ່ລະປີ.
2. ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ, ຈຶ່ງຂໍເຊີນບໍລິສັດທີ່ປຶກສາ ທີ່ມີໃບອານຸຍາດດໍາເນີນທຸລະກິດ ດ້ານທີ່ປຶກສາຄຸ້ມຄອງການກໍ່ສ້າງວຽກຂົວທາງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນໂຄງການດັ່ງກ່າວ ໄລຍະເວລາຄຸ້ມຄອງການກໍ່ສ້າງແມ່ນ 12 ເດືອນ;
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນນີ້ແມ່ນອານຸຍາດໃຫ້ທຸກບໍລິສັດ ທີ່ມີຄວາມເໝາະສົມ, ມີໃບອານຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບວຽກໃຫ້ບໍລິການທີ່ປຶກສາ ຢູ່ໃນຂອບເຂດແຂວງບໍລິຄໍາໄຊ ຫຼືທົ່ວປະເທດ.
5. ທີ່ປຶກສາ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ຂະແໜງຂົວທາງ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ, ສໍານັກງານຕັ້ງຢູ່ທາງຫຼວງແຫ່ງຊາດເລກທີ21, ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄໍາໄຊ (054 212091) ແລະ ຂະແໜງຈັດຊື້-ຈັດຈ້າງ, ພະແນກການເງິນແຂວງບໍລິຄໍາໄຊ, ສໍານັກງານຕັ້ງຢູ່ທາງຫຼວງແຫ່ງຊາດເລກທີ 21, ບ້ານໂພນໄຊ, ເມືອງປາກຊັນ, ແຂວງບໍລິຄໍາໄຊ, (020 28870055) ໃນໂມງລັດຖະການ (8:00 ຫາ 12:00 ໂມງ ແລະ 13:00 ຫາ16:00 ໂມງ), ວັນຈັນເຖິງວັນສຸກ,ລະຫວ່າງວັນທີ 17 - 27 ກໍລະກົດ 2026, ໃນລາຄາ 500.000 ກີບ/ຊອງ.
6. ບໍລິສັດທີ່ປຶກສາທີ່ມີຄວາມສົນໃຈ ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມໃນການສະໜອງການບໍລິການທີ່ປຶກສາ (ເອກະສານຍື່ນສະເໜີຄວາມສົນໃຈປະກອບມີດີ: ສິ່ງພິມໂຄສະນາຂອງບໍລິສັດ, ລາຍລະອຽດຂອງໜ້າວຽກທີ່ຄ້າຍຄືກັນ, ປະສົບການຂອງໜ້າວຽກທີ່ຄ້າຍຄືກັນ, ພະນັກງານທີ່ມີປະສົບການທີ່

ເທມາະສົມ ແລະ ອື່ນໆ), ເອກະສານຍື່ນຄວາມສົນໃຈຕ້ອງບໍ່ເກີນ 30 ໜ້າ (ບໍ່ລວມເອົາສິ່ງພິມຕ່າງໆ) ບັນດາມາດຖານໃຫຍ່ໃນການຄັດເລືອກມີຄື:

- ບໍລິສັດຈະຕ້ອງມີປະສົບການເປັນທີ່ປຶກສາໂຄງການກໍ່ສ້າງທາງປູຢາງຢ່າງໜ້ອຍ 5 ປີ ຂຶ້ນໄປ,
- ມີບຸກຄະລາກອນທີ່ມີປະສົບການ 10 ປີ ຊໍານານງານກ່ຽວກັບວຽກຄວບຄຸມການກໍ່ສ້າງຂົວ-ທາງ ຈໍານວນ 01 ຄົນ;
- ມີບຸກຄະລາກອນທີ່ມີປະສົບການ 5 ປີ ຊໍານານງານກ່ຽວກັບວຽກຄວບຄຸມຄຸນນະພາບວັດສະດຸ ແລະ ຄຸນງານກໍ່ສ້າງທາງປູຢາງ ຈໍານວນ 01 ຄົນ;
- ບໍລິສັດຕ້ອງມີພາຫະນະຮັບໃຊ້, ນໍ້າມັນເຊື້ອໄຟ, ທີ່ຢູ່ອາໃສ, ຫ້ອງການ ແລະ ສິ້ນເປືອງຕ່າງໆເປັນຂອງຕົນເອງ;

7. ບໍລິສັດທີ່ປຶກສາຈະຖືກຄັດເລືອກ ໂດຍອີງຕາມວິທີຄັດເລືອກຄຸນນະພາບ ແລະ ລາຄາ QCBS (Quality and Cost – Base Systems) ດ້ວຍການຍື່ນຊອງຄຸນວຸດທິ ແລະ ດ້ານການເງິນພ້ອມກັນ.
8. ການເປີດຊອງປະມູນຈະໄດ້ຈັດຂຶ້ນທີ່ຫ້ອງປະຊຸມຂະແໜງຂົວທາງ ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄໍາໄຊ, ສໍານັກງານຕັ້ງຢູ່ທາງຫຼວງແຫ່ງຊາດເລກທີ 21, ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄໍາໄຊ, ໃນເວລາ 9:30 ໂມງເຊົ້າ, ວັນທີ 31 ກໍລະກົດ 2026, ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັ້ນປະມູນ, ຊອງປະມູນໃດທີ່ສົ່ງຊ້າກ່ອນເວລາກໍານົດຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຮັບຊາບ ແລະ ເຂົ້າຮ່ວມການປະມູນຕາມແຈ້ງເຊີນດັ່ງກ່າວນີ້ດ້ວຍ.

**ເຊັນແທນຫົວໜ້າພະແນກ**
**ຮອງຫົວໜ້າພະແນກ**

ໂກສາຈານ ແສນທະວິໄຊ

ເບີໂທຕິດຕໍ່
1. ທ່ານ ອິນປົງ ອິນທິລາດ 02052944447
2. ທ່ານ ຄໍາປະເສີດ ພັນທະວົງ (ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ) 020 28870055